**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ຄະນະປະຈຳ ເລກທີ 29 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 07 / 02 / 22

# ມະຕິ
## ຂອງຄະນະປະຈຳສະພາແຫ່ງຊາດ
## ວ່າດ້ວຍ ການໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງສະພາແຫ່ງຊາດ

ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020

ເພື່ອເຮັດໃຫ້ວຽກງານໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງສະພາແຫ່ງຊາດ ໄດ້ຮັບຜົນດີ ແລະ ມີປະສິດທິຜົນ.

**ຄະນະປະຈຳສະພາແຫ່ງຊາດ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ມະຕິສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ເນື້ອໃນ, ຮູບການ ໃນການໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງສະພາແຫ່ງຊາດ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ດຳເນີນຢ່າງເປັນລະບົບຕໍ່ເນື່ອງ, ເລິກເຊິ່ງ ແທດຕົວຈິງ ແລະ ທົ່ວເຖິງ ແນໃສ່ເພີ່ມທະວີຄວາມຮັບຮູ້, ເຂົ້າໃຈ, ຍົກສູງສະຕິເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນທົ່ວສັງຄົມ.

**ມາດຕາ 2 ການໂຄສະນາ ເຜີຍແຜ່**

ການໂຄສະນາ ເຜີຍແຜ່ ແມ່ນ ການອະທິບາຍ, ຊີ້ແຈງ, ແນະນຳ, ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບເນື້ອໃນຂອງ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງສະພາແຫ່ງຊາດ ດ້ວຍຮູບການ ແລະ ວິທີການຕ່າງໆ ເຮັດໃຫ້ພົນລະເມືອງລາວ ມີຄວາມຮັບຮູ້, ເຂົ້າໃຈ ຢ່າງຖືກຕ້ອງ, ຄົບຖ້ວນ ແລະ ປະຕິບັດມີຄວາມສັກສິດ, ເຂັ້ມງວດ.

**ມາດຕາ 3 ຫຼັກການພື້ນຖານ ໃນການໂຄສະນາ ເຜີຍແຜ່**

ການໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງສະພາແຫ່ງຊາດ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຮັບປະກັນຄວາມ ຖືກຕ້ອງ, ສອດຄ່ອງ ຕາມເນື້ອໃນຄວາມໝາຍຂອງ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;

2. ສອດຄ່ອງ ແລະ ແທດເໝາະກັບສະພາບຄວາມເປັນຈິງຂອງເປົ້າໝາຍ;

3. ດຳເນີນຢ່າງ ເປັນລະບົບຕໍ່ເນື່ອງ, ເລິກເຊິ່ງ, ມີຈຸດສຸມ, ກວ້າງຂວາງ ແລະ ທົ່ວເຖິງ.

## ໝວດທີ 2
## ເປົ້າໝາຍ, ເນື້ອໃນ ແລະ ຮູບການໂຄສະນາ ເຜີຍແຜ່

**ມາດຕາ 4 ເປົ້າໝາຍການໂຄສະນາ ເຜີຍແຜ່**

ການໂຄສະນາ ເຜີຍແຜ່ ມີເປົ້າໝາຍ ຕົ້ນຕໍ ດັ່ງນີ້:

1. ປະຊາຊົນລາວບັນດາເຜົ່າ;
2. ພະນັກງານ-ລັດຖະກອນ;
3. ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
4. ນັກສຶກສາ, ນັກຮຽນຮູ້ປັນຍາຊົນ;
5. ນັກທຸລະກິດ ທັງພາກລັດ ແລະ ເອກະຊົນ;
6. ເປົ້າໝາຍອື່ນ.

**ມາດຕາ 5 ເນື້ອໃນ ການໂຄສະນາ ເຜີຍແຜ່**

ເນື້ອໃນການໂຄສະນາ ເຜີຍແຜ່ ມີ ດັ່ງນີ້:

1. ລັດຖະທຳມະນູນ;

2. ກົດໝາຍໃນຂົງເຂດສະພາແຫ່ງຊາດ ຄື: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ກົດໝາຍວ່າດ້ວຍການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງ ຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

3. ມະຕິກອງປະຊຸມ ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ອື່ນໆ.

**ມາດຕາ 6 ຮູບການ ການໂຄສະນາ ເຜີຍແຜ່**

ການໂຄສະນາ ເຜີຍແຜ່ ມີ ຮູບການ ດັ່ງນີ້:

1. ການຈັດກອງປະຊຸມ ດ້ວຍການ ບັນລະຍາຍ, ສຳມະນາ ຫຼື ປາຖະກະຖາ;
2. ຜ່ານພາຫະນະສື່ມວນຊົນ ເຊັ່ນ: ສື່ສິ່ງພິມ, ສື່ເອເລັກໂຕຣນິກ ລວມທັງຜະລິດຕະພັນສື່ມວນຊົນ.

## ໝວດທີ 3
## ການຈັດຕັ້ງທີ່ຮັບຜິດຊອບວຽກງານໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງສະພາແຫ່ງຊາດ

**ມາດຕາ 7 ການຈັດຕັ້ງທີ່ຮັບຜິດຊອບວຽກງານໂຄສະນາ ເຜີຍແຜ່**

ການຈັດຕັ້ງທີ່ຮັບຜິດຊອບວຽກງານໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດ ໝາຍ ຂອງສະພາແຫ່ງຊາດ ມີ ດັ່ງນີ້:

1. ກຳມາທິການກົດໝາຍ;

2. ກຳມາທິການອື່ນ ຂອງສະພາແຫ່ງຊາດ;

3. ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ.

**ມາດຕາ 8 ສິດ ແລະ ໜ້າທີ່ ຂອງກຳມາທິການກົດໝາຍ**

ກຳມາທິການກົດໝາຍ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການ ໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ປະຈຳປີ ແລະ ຫ້າ ປີ ໃນຂົງເຂດສະພາແຫ່ງຊາດ;

2. ເປັນເຈົ້າການໃນການນຳເອົາ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດ ຂອງສະພາແຫ່ງຊາດ ໄປໂຄສະນາ ເຜີຍແຜ່;

3. ຄົ້ນຄວ້າ, ສ້າງເອກະສານ ແລະ ຄູ່ມື ທີ່ຕິດພັນກັບການໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ຂອງສະພາແຫ່ງຊາດ ແລະ ນິຕິກຳໃຕ້ກົດໝາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ເປັນເຈົ້າການ ໃນການຕິດຕາມ, ຊຸກຍູ້ ການໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງບັນດາກະຊວງ, ອົງການ ແລະ ປະສານສົມທົບກັບກຳມາທິການອື່ນ ຂອງສະພາແຫ່ງຊາດ ໃນການສະຫຼຸບ, ສັງລວມ ວຽກງານໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເພື່ອລາຍງານຕໍ່ ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 9 ສິດ ແລະ ໜ້າທີ່ ຂອງກຳມາທິການອື່ນ ຂອງສະພາແຫ່ງຊາດ**

ກຳມາທິການອື່ນ ຂອງສະພາແຫ່ງຊາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ, ຊຸກຍູ້ ແລະ ໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດຂະແໜງການຕົນ ຮັບຜິດຊອບ;

2. ເປັນເຈົ້າການ ໃນການນຳເອົານິຕິກຳໃຕ້ກົດໝາຍ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໄປໂຄສະນາ ເຜີຍແຜ່;

3. ເຂົ້າຮ່ວມການໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;

4. ສະຫຼຸບ, ສັງລວມ ການຕິດຕາມ, ຊຸກຍູ້ ແລະ ໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ.

**ມາດຕາ 10 ສິດ ແລະ ໜ້າທີ່ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງແຜນການ ໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ເປັນເຈົ້າການໃນການນຳເອົາ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດ ຂອງສະພາແຫ່ງຊາດ ໄປໂຄສະນາ ເຜີຍແຜ່ ຢູ່ເຂດເລືອກຕັ້ງຂອງຕົນ;

3. ເຂົ້າຮ່ວມ, ຕິດຕາມ, ຊຸກຍູ້ການໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ ກົດໝາຍ ຢູ່ເຂດເລືອກຕັ້ງຂອງຕົນ;

4. ປະສານສົມທົບ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ ໃນການເຄື່ອນໄຫວໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຢູ່ເຂດເລືອກຕັ້ງຂອງຕົນ;

5. ສະຫຼຸບ, ລາຍງານ ວຽກງານໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕໍ່ ຄະນະປະຈຳສະພາແຫ່ງຊາດ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 11 ງົບປະມານ**

ງົບປະມານ ທີ່ນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງສະພາແຫ່ງຊາດ ແມ່ນໄດ້ມາຈາກ ງົບປະມານແຫ່ງລັດ, ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງສັງຄົມ ແລະ ການສະໜັບສະໜູນ ຈາກອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 12 ການຈັດຕັ້ງປະຕິບັດ**

ກຳມາທິການກົດໝາຍ, ກຳມາທິການອື່ນ, ຄະນະເລຂາທິການສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 13 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**
ປະທານ

ປອ ໄຊສົມພອນ ພົມວິຫານ